ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກ ໄອຍະທາທິການ ແລະ ຂົນສົ່ງ

ເລກທີ: 4578 /ຍທຂ.ປວ

ວັນທີ: 18 OCT 2017

ກະຊວງ ...

ເລີ່ມ 22289

20-10-2017

ຮຽນ : ທ່ານຫົວໜ້າຫ້ອງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ ທີ່ນັບຖື.

ເລື່ອງ : ຕອບຄຳຖາມສາຍດ່ວນ 1518 ຂອງຂະແໜງ ຍທຂ

- ອີງຕາມ ໜັງສືທາງລັດຖະການ ຂອງຫ້ອງການ ກະຊວງ ໂຍທາທິການ ແລະ ຂົນສົ່ງ, ສະບັບ ເລກທີ 20646/ ຫກ.ສລ, ລົງວັນທີ 27 /09 /2017.

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດສົ່ງແຈ້ງ ແລະ ຕອບຄຳຖາມຂອງປະຊາຊົນທີ່ມີຕໍ່ຂະແໜງ ຍທຂ ຜ່ານໂທລະສັບສາຍດ່ວນຂອງລັດຖະບານ ດັ່ງນີ້:

<u>ຄຳຖາມ</u> 1. ປະຊາຊົນ ບ້ານ ສີຖານໃຕ້ ເມືອງ ຫາດຊາຍຟອງ ນະຄອນຫຼວງວຽງຈັນ ( ພະນັກງານບໍານານ ) ສະເໜີເລື່ອງການດູດຫີນຊາຍ ຂອງຫຼາຍ ບໍລິສັດ ເພື່ອພັດທະນາບ້ານເມືອງ ແຕ່ເປັນຫຍັງບໍ່ມີຄວາມຮັບຜິດຊອບ ບູລະນະເສັ້ນທາງແຄມຂອງ ບ່ອນທີ່ໃຊ້ຫຼວງຂົນຫີນ, ຂົນຊາຍ ເຮັດໃຫ້ເສັ້ນທາງເປ່ເພ, ມີຂີ້ຝຸ່ນຫຼາຍ ປະຈຸບັດປະຊາຊົນໄດ້ຮັບແຕ່ຄວາມຫຍຸ້ງຍາກຈາກການ ເຄື່ອນໄຫວຂົນຫີນ ຂົນຊາຍດັ່ງກ່າວ ຂໍໃຫ້ພາກສ່ວນກ່ຽວຂ້ອງແກ້ໄຂ.

**ຕອບ:**

1) ການອານຸຍາດຂຸດຄົ້ນຢູ່ເຂດບ້ານ ສີຖານໃຕ້ - ນາໄຮ່ ເມືອງຫາດຊາຍຟອງ ນະຄອນຫຼວງວຽງຈັນ ມີ 4 ບໍລິສັດເຊິ່ງ 2 ບໍລິສັດ ແມ່ນພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ເປັນຜູ້ອອກອານຸຍາດ ເນື້ອທີ່ຂຸດຄົ້ນແມ່ນ 03ເຮັກຕາ ແລະ ອີກ2 ບໍລິສັດ ແມ່ນກົມໂຍທາທິການທາງນ້ຳ ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນຜູ້ອອກອານຸຍາດ ເນື້ອທີ່ຂຸດຄົ້ນ ແມ່ນ 35,50ເຮັກຕາ ລວມເນື້ອທີ່ຂຸດຄົ້ນໃນເຂດນີ້ແມ່ນ 38,50ເຮັກຕາ.
2) ການປະຕິບັດພັນທະຕໍ່ລັດກໍ່ຄືນະຄອນຫຼວງ ແລະ ເມືອງ, ທຸກບໍລິສັດປະຕິບັດຕາມລະບຽບການອັນດຽວກັນ ປະກອບມີຄ່າຊົດເຊີຍພະຍາກອນຫີນ - ຊາຍ ຄ່າພັນທະອາກອນຕ່າງໆ ຄ່າກອງທຶນທາງ ເມືອງຫາດຊາຍຟອງ ແລະ ການຊຸກຍູ້ອື່ນໆຕາມການສະເໜີ ຫຼື ລະດົມຂອງອໍານາດການປົກຄອງທ້ອງຖິ່ນ.
3) ການບູລະນະສ້ອມແປງ ແລະ ຫົດນ້ຳທາງເຂດດັ່ງກ່າວແມ່ນຢູ່ໃນຄວາມຮັບຜິດຊອບ ຂອງເມືອງຫາດຊາຍຟອງ ນອກນັ້ນຍັງມີການລະດົມທຶນສົມທົບຈາກບໍລິສັດຂຸດຄົ້ນຫີນ - ຊາຍ ຕາມຄວາມຈໍາເປັນສຸກເສີນ.
4) ມາດຕະການໃນການຄຸ້ມຄອງແກ້ໄຂໃນຕໍ່ໜ້າ ຂໍໃຫ້ພໍ່ແມ່ປະຊາຊົນ ແລະ ທຸກພາກສ່ວນຊ່ວຍເປັນເຈົ້າການ ຕິດຕາມກວດກາການຈັດຕັ້ງປະຕິບັດຂອງຜູ້ປະກອບການ ແລະ ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຫາກພົບເຫັນການລະເມີດ ຫຼື ບໍ່ປະຕິບັດຕາມລະບຽບການທີ່ວາງໄວ້ ທ່ານສາມາດເຮັດໜັງສືສະເໜີພ້ອມຫຼັກຖານການກະທຳຜິດ ຫາອໍານາດການປົກຄອງບ້ານ ກຸ່ມ ແລະ ການຈັດຕັ້ງທີ່ກ່ຽວຂ້ອງເພື່ອມີມາດຕະການອັນເໝາະສົມໃນການລົງໂທດ ຖ້າມີຄວາມຜິດຮ້າຍແຮງຈະຖືກໃຫ້ຢຸດເຊົາໃນປີຕໍ່ໄປ.

ຄຳຖາມ 2.ປະຊາຊົນເຂດບ້ານດອນກອຍດ ເມືອງສີສັດຕະນາກ ສະເໜີເສັ້ນທາງຕັດໃໝ່ລະຫວ່າງບ້ານດອນກອຍ ໄປຫາທາງ 450 ປີ, ເຫັນວ່າ ຈຸດບ່ອນທາງເວັ້ນຂົວເຫັນວ່າມີຄວາມຫຍຸ້ງຍາກຫຼາຍ ເປັນບວກເປັນຂຸມ ຂໍໃຫ້ບໍລິສັດຜູ້ຮັບເໝົາຊ່ວຍກວດຖົມ ໃຫ້ໄປມາງ່າຍແດ່, ປະຊາຊົນເຂົ້າໃຈວ່າ ທາງບໍ່ທັນແລ້ວສົມບູນ ແຕ່ກະຂໍໃຫ້ເພີ່ມຄວາມເອົາໃຈໃສ່ຕື່ມແດ່ ເພາະບໍລິສັດກໍເຝົ້າຢູ່ຫັ້ນ ຈຶ່ງຂໍໃຫ້ໃສ່ໃຈເລື່ອງດັ່ງກ່າວນີ້ຊ່ວຍປະຊາຊົນແດ່.

ຕອບ:

- ອີງຕາມສັນຍາຮັບເໝົາກໍ່ສ້າງເສັ້ນທາງຕັດໃໝ່ ແຕ່ບ້ານ ດອນນົກຂຸ້ມ (ຕິດກັບສະໜາມຝຶກຊ້ອມກ໊ອຟ) ໄປຫາເສັ້ນທາງກຳແພງເມືອງ (ຜ່ານບຶງທາດຫຼວງ)-ບ້ານ ຊຽງດາ-ດົງໂພສີ ເຊື່ອມຫາ ເສັ້ນທາງ 450 ປີ ແລະ ທາງເຊື່ອມຕໍ່ບ້ານ ນາຄວາຍ. ສະບັບເລກທີ: 2740/ຍທຂ.ນວ, ລົງວັນທີ: 19/07/2012.

ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໃນນາມເຈົ້າຂອງໂຄງການກໍ່ສ້າງເສັ້ນທາງຕັດໃໝ່ແຕ່ບ້ານດອນນົກຂຸ້ມ (ຕິດກັບສະໜາມຝຶກຊ້ອມກ໊ອຟ) ໄປຫາ ເສັ້ນທາງກຳແພງເມືອງ (ຜ່ານບຶງທາດຫຼວງ)-ບ້ານ ຊຽງດາ-ດົງໂພສີເຊື່ອມຫາເສັ້ນທາງ 450 ປີ ແລະ ເຊື່ອມຕໍ່ບ້ານ ນາຄວາຍ. ຂໍຊີ້ແຈງກ່ຽວກັບການສະເໜີຂອງປະຊາຊົນເຂດ ບ້ານດອນກອຍ ໂດຍຜ່ານທາງສາຍດ່ວນ 1518 ຂອງຂະແໜງ ຍທຂ ກ່ຽວກັບຄວາມຫຍຸ້ງຍາກໃນການສັນຈອນຕາມທາງເວັ້ນເຂດກໍ່ສ້າງຂົວຂ້າມບຶງທາດຫຼວງດັ່ງນີ້:

1) ໃນບໍລິເວນເສັ້ນທາງເວັ້ນເຂດກໍ່ສ້າງຂົວດັ່ງກ່າວແມ່ນເປັນເຂດທີ່ຜ່ານບຶງໜອງທີ່ເປັນບ່ອນເຕົ້າໂຮມນ້ຳໃນລະດູຝົນ ແລະ ເນື້ອທີ່ມີນ້ຳຊຶມບວມຢູ່ຕະຫຼອດ ບວກກັບການສັນຈອນຂອງລົດບັນທຸກໜັກແລ່ນຜ່ານຕາມທາງເວັ້ນໃນເຂດນັ້ນມີຈຳນວນຫຼາຍ ເຊິ່ງເປັນສາເຫດເຮັດໃຫ້ເສັ້ນທາງດັ່ງກ່າວເປ່ເພ່ເສຍຫາຍໄວຂຶ້ນ.
2) ຊ່ວງນີ້ແມ່ນຢູ່ໃນໄລຍະລະດູຝົນ ເວລາຝົນຕົກແຮງ (ຫຼາຍ) ເກີດມີນ້ຳຖ້ວມຂັງສູງລົ້ນຄວນ ເຮັດໃຫ້ການສ້ອມແປງມີຄວາມຫຍຸ້ງຍາກຫຼາຍເພາະວ່າທາງບໍລິສັດຜູ້ຮັບເໝົາກໍ່ບໍ່ສາມາດເຂົ້າຂຸດຄົ້ນນຳເອົາວັດສະດຸໃນບໍ່ດິນເພື່ອມາສ້ອມແປງທາງເວັ້ນໄດ້. ສະນັ້ນຂໍຊີ້ແຈງມາຍັງທ່ານ ແລະ ປະຊາຊົນເຂດດັ່ງກ່າວຊາບ ເພື່ອຄວາມສະດວກໃນການສັນຈອນໃນໄລຍະລະດູຝົນນີ້ ຫຼື ໃນໄລຍະທີ່ການກໍ່ສ້າງຂົວບໍ່ທັນສຳເລັດນີ້ຂໍສະເໜີມາຍັງພໍ່ແມ່ປະຊາຊົນໃນເຂດດັ່ງກ່າວ ຄວນຫຼີກເວັ້ນໄປນຳໃຊ້ເສັ້ນທາງແຕ່ທາດຫຼວງ ຫາ ບ້ານຫົວຂົວ, ບ້ານໂນນຄໍ້ ແລະ ເສັ້ນທາງແຕ່ບ້ານໜອງໄຮ ຫາ ບ້ານດົງຄຳຊ້າງກ່ອນເພາະສອງເສັ້ນທາງນີ້ກໍ່ສາມາດເຊື່ອມຈອດໃສ່ກັນໄດ້ ເພື່ອໃຫ້ຮອດລະດູແລ້ງ ຫຼື ການກໍ່ສ້າງຂົວດັ່ງກ່າວສຳເລັດຈຶ່ງຈະສາມາດສັນຈອນໄດ້ສະດວກຂຶ້ນ.

ຮັບແທນ. **ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງ**
**ນະຄອນຫຼວງວຽງຈັນ.**

ສຸລິວັນ ພົມມະຫາໄຊ